ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
------===000===-------

ທະນາຄານແຫ່ງ ສປປ ລາວ

ເລກທີ 02 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 21 ກຸມພາ 2017

ສໍານັກງານ ຄຄຊ
ເລກທີ 0212
ວັນທີ 22 FEB 2017
ໂທລະສັບ 021 217770

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈໍາເດືອນ ມັງກອນ 2017 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອຽນໜຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈໍາເດືອນມັງກອນ 2017 ແລະ ທິດທາງແຜນການໃນເດືອນ ກຸມພາ 2017 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ປະຈໍາເດືອນ ທັນວາ 2016, ກອງປະຊຸມຄະນະເສດຖະກິດມະຫາພາກ, ກອງປະຊຸມວຽກງານກວດກາທົ່ວປະເທດ, ກອງປະຊຸມປຶກສາຫາລືເພື່ອຄວາມເປັນເອກະພາບ ກ່ຽວກັບບົດບັນທຶກລວມຜົນການກວດສອບ ທຫລ ປະຈໍາປີ 2015 ຂອງອົງການກວດສອບແຫ່ງລັດ, ກອງປະຊຸມລະຫວ່າງ ທຫລ, ທະນາຄານສົ່ງເສີມກະສິກໍາຂອງລາວ ແລະ ສະຫະກອນສິນເຊື່ອຊົນນະບົດ ແຂວງໄຮໜານ ສປ ຈີນ ກ່ຽວກັບຄວາມເປັນໄປໄດ້ໃນການຮ່ວມມືລະຫວ່າງ ທະນາຄານສົ່ງເສີມກະສິກໍາຂອງລາວ ແລະ ສະຫະກອນສິນເຊື່ອຊົນນະບົດ ແຂວງໄຮໜານ ສປ ຈີນ;
- ສໍາເລັດກອງປະຊຸມຕ່າງໆ: ກອງປະຊຸມປະກອບຄໍາເຫັນໃສ່ຮ່າງກົດໝາຍວ່າດ້ວຍ ລະບົບຊໍາລະສະສາງແຫ່ງຊາດ, ກອງປະຊຸມເປີດກວ້າງວຽກງານກວດສອບ ປະຈໍາປີ 2016, ກອງປະຊຸມປຶກສາຫາລືກ່ຽວກັບການປະເມີນຄວາມສ່ຽງລະດັບຊາດ ວຽກງານຕ້ານ ສະກັດກັ້ນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ກອງປະຊຸມພົບປະລະຫວ່າງ ທຫລ ແລະ ທະນາຄານທຸລະກິດ, ກອງປະຊຸມຄະນະຮັບຜິດຊອບ ພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ 2, ກອງປະຊຸມປຶກສາຫາລືກ່ຽວກັບການປະເມີນຜົນພະນັກງານຂອງ ທຫລ ປະຈໍາປີ 2016, ກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດແຈ້ງການ ກ່ຽວກັບການໂອນເງິນເຂົ້າມາຈາກຕ່າງປະເທດຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ກອງປະຊຸມປຶກສາຫາລາລະຫວ່າງ ທຫລ ກັບ ບໍລິສັດກວດສອບພາຍນອກ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ, ສໍາເລັດກອງປະຊຸມ ເພື່ອຜ່ານຮ່າງບົດແນະນໍາຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ແລະ ຜ່ານຂໍ້ຕົກລົງວ່າດ້ວຍການບໍລິຫານຊັບສິນຂອງທະນາຄານ ຕໍ່ຄໍາເຫັນຂອງຊ່ຽວຊານທະນາຄານໂລກ (WB), ກອງປະຊຸມສໍາມະນາ

ກ່ຽວກັບການພັດທະນາລະບົບລາຍງານຂໍ້ມູນຂ່າວສານສິນເຊື່ອ, ຈັດພິທີປາຖະກະຖາເນື່ອງໃນໂອກາດ ລະນຶກວັນສາກົນ ຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ "ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເພື່ອການພັດທະນາແບບຍືນຍົງ";

- ສຳເລັດການເຜີຍແຜ່ວຽກງານການຄຸ້ມຄອງສະຖາບັນການເງິນ ທີ່ແຂວງອຸດົມໄຊ;
- ສຳເລັດອອກແຈ້ງການ ກ່ຽວກັບການໂອນເງິນເຂົ້າມາຈາກຕ່າງປະເທດຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ;
- ສຳເລັດການອອກແຈ້ງການເຖິງ ທທກ ທົ່ວລະບົບ ກ່ຽວກັບການນຳສົ່ງແຜນການດຳເນີນທຸລະກິດ ປະຈຳປີ 2017;
- ສຳເລັດການຕ້ອນຮັບຄະນະທີມງານຊ່ຽວຊານຈາກທະນາຄານໂລກ (WB) ທີ່ມາປຶກສາຫາລືກ່ຽວກັບແຜນວຽກບຸລິມະສິດຂະແໜງການເງິນ ເພື່ອຈັດຕັ້ງປະຕິບັດແຜນເງິນກູ້ (GGDPO).

## III. ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

– ໃນເດືອນ 01/2017 ສະພາບເສດຖະກິດໂລກ ຄາດວ່າຈະຂະຫຍາຍຕົວໃນຈັງວະດີຂຶ້ນ ເນື່ອງຈາກໄດ້ຮັບແຮງຍູ້ສຳຄັນຈາກການຟື້ນຕົວຂອງເສດຖະກິດ ສ. ອາເມລິກາ ເຫັນໄດ້ຈາກຕົວຊີ້ວັດທາງດ້ານເສດຖະກິດ ທີ່ອອກມາຢູ່ໃນລະດັບເພິ່ງພໍໃຈ ແລະ ເປັນໜຶ່ງໃນປັດໃຈໃນການພິຈາລະນາຈະປັບຂຶ້ນອັດຕາດອກເບ້ຍຕື່ມອອກຂອງ ທະນາຄານກາງ ສ. ອາເມລິກາ (FED). ພ້ອມດຽວກັນນີ້, ກອງທຶນການເງິນສາກົນ (IMF)[1] ໄດ້ເຜີຍແຜ່ບົດລາຍງານລ່າສຸດວ່າ ຈະຍັງສືບຕໍ່ຮັກສາຕົວເລກການຄາດຄະເນເສດຖະກິດໂລກ ໃນປີ 2017 ແລະ 2018 ຢູ່ໃນລະດັບ 3,4% ແລະ 3,8% ຕາມລຳດັບ ຍ້ອນການຄາດຄະເນກິດຈະກຳທາງດ້ານເສດຖະກິດໂລກຈະມີທ່າອ່ຽງຟື້ນຕົວດີຂຶ້ນ ໂດຍສະເພາະຢູ່ບັນດາປະເທດຕະຫຼາດເກີດໃໝ່ ແລະ ປະເທດພັດທະນາແລ້ວ;

– ເງິນໂດລາແຂງຄ່າ 1,46% ທຽບເອີໂຣ ພາຍຫຼັງຄະນະກຳມະທິການກຳນົດນະໂຍບາຍການເງິນ ຂອງທະນາຄານກາງສະຫະລັດ (FOMC) ໄດ້ປັບຂຶ້ນອັດຕາດອກເບ້ຍໄລຍະສັ້ນ 0,25% ຈາກ 0,50% ມາເປັນ 0,75%;

– ລາຄານ້ຳມັນ ເພີ່ມຂຶ້ນ 10,40% ເປັນ 54,19 ໂດລາ/ບາເຣວ ພາຍຫຼັງຜູ້ຜະລິດນ້ຳມັນກຸ່ມ OPEC ແລະ ນອກກຸ່ມ OPEC (non-OPEC) ມີແຜນປັບຫຼຸດກຳລັງການຜະລິດນ້ຳມັນລົງປະມານ 300.000 ບາເຣວຕໍ່ວັນ. ສ່ວນລາຄາຄຳຫຼຸດລົງ 2,97% ເປັນ 1.156,27 ໂດລາ/ອອນ.

### 2. ສະພາບເງິນຕາພາຍໃນ.

– ອັດຕາເງິນເຟີ້ປະຈຳເດືອນ 01/2017 (ຕົວເລກຄາດຄະເນ) ຢູ່ໃນລະດັບ 2,84%;

– ຖານເງິນຕາປະຈຳເດືອນ 01/2017 ຫຼຸດລົງ 497,61 ຕື້ກີບ ຫຼື 1,49% ທຽບໃສ່ເດືອນ 12/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 280,62 ຕື້ກີບ ຫຼື 0,86%. ສາເຫດຍ້ອນ ທທກ ຖອນເງິນຝາກອອກນຳໃຊ້ສຸດທິ 178,41 ລ້ານໂດລາສະຫະລັດ ແລະ ລັດຖະບານຊຳລະເງິນລ່ວງໜ້າໃຫ້ ທຫລ ຈຳນວນ 500 ຕື້ກີບ (ບ້ວງເງິນເດືອນພະນັກງານ ເດືອນ 5-6/2016), ເຖິງແມ່ນວ່າ ທທກ ຮັບເງິນໂອນຈາກຕ່າງປະເທດ 78,11 ລ້ານໂດລາສະຫະລັດ, ທຫລ ປ່ອຍສິນເຊື່ອໃຫ້ໂຄງການບຸລິມະສິດຂອງລັດ ຈຳນວນ 30 ລ້ານໂດລາສະຫະລັດ. ປະລິມານເງິນ $M_2$ ເພີ່ມຂຶ້ນ 2.046,55 ຕື້ກີບ ຫຼື 2,96% ທຽບໃສ່ເດືອນ 12/2016, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8.899,16 ຕື້ກີບ ຫຼື 14,8%;

---

[1] ກອງທຶນສາກົນ IMF ເຜີຍແຜ່ບົດລາຍງານຄັ້ງວັນທີ 16/01/2017 ຄັ້ງຜ່ານມານັ້ນແມ່ນ ເດືອນ 10/2016

– ອັດຕາແລກປ່ຽນທົ່ວລະບົບ ໃນເດືອນ 01/2017[2] ທຽບເດືອນ 12/2016[3] ເໜັງຕີງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບ ອ່ອນຄ່າ 0,14% ທຽບເງິນໂດລາ ແຕ່ແຂງຄ່າ 0,50% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາ ເຫັນວ່າເງິນກີບອ່ອນຄ່າ 1,92% ທຽບກັບເງິນໂດລາ ແລະ ອ່ອນຄ່າ 2,68% ທຽບເງິນບາດ;

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 01/2017 (ແຕ່ວັນທີ 12/12/2016-12/01/2017) ເຫັນວ່າ ເພີ່ມຂຶ້ນ 13,98% ເນື່ອງຈາກປະລິມານຄວາມຕ້ອງການເພີ່ມຂຶ້ນ. ຄວາມຕ້ອງການຫຼາຍກວ່າການຕອບສະໜອງເຫັນໄດ້ຈາກ ທທກ ຂາຍສຸດທິ 33,22 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍເງິນບາດສຸດທິ 7.894,49 ລ້ານບາດ ຫຼື 246,18 ລ້ານໂດລາສະຫະລັດທຽບເທົ່າ, ແຕ່ຊື້ໂດລາສຸດທິ 212,96 ລ້ານໂດລາສະຫະລັດ. ທຫລ ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 54,35 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ຂາຍໂດລາສຸດທິ 48,46 ລ້ານໂດລາສະຫະລັດ ແລະ ຂາຍເງິນບາດສຸດທິ 189 ລ້ານບາດ ຫຼື 5,89 ລ້ານໂດລາສະຫະລັດທຽບເທົ່າ;

– ດຸນການຊຳລະກັບຕ່າງປະເທດປະຈຳເດືອນ 01/2017 (ແຕ່ວັນທີ 12/12/2016-12/01/2017) ໄດ້ມີກະແສເງິນໄຫຼເຂົ້າຜ່ານລະບົບທະນາຄານສຸດທິ 151,68 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼເຂົ້າ 794,86 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ມາຈາກການຊຳລະຄ່າສິນຄ້າສົ່ງອອກຂອງວິສາຫະກິດ ຈຳນວນ 253 ລ້ານໂດລາສະຫະລັດ ແລະ ເງິນລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 90,71 ລ້ານໂດລາສະຫະລັດ, ເງິນກູ້ຢືມຈາກຕ່າງປະເທດຂອງຫົວໜ່ວຍທຸລະກິດ ແລະ ທະນາຄານທຸລະກິດ ຈຳນວນ 143,20 ລ້ານໂດລາສະຫະລັດ ແລະ 152,89 ລ້ານໂດລາສະຫະລັດ ຕາມລຳດັບ. ສ່ວນກະແສເງິນໄຫຼອອກ ຈຳນວນ 643,19 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ມາຈາກການຊຳລະຄ່າສິນຄ້າຂອງວິສາຫະກິດ ຈຳນວນ 273,54 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ຢືມຈາກຕ່າງປະເທດຂອງທະນາຄານທຸລະກິດ ຈຳນວນ 223,15 ລ້ານໂດລາສະຫະລັດ.

## 3. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/01/2017 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 61.549,72 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາເພີ່ມຂຶ້ນ 3,10%. ເງິນຝາກເປັນເງິນກີບເພີ່ມຂຶ້ນ 0,31% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 47,46% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 5,76% ຊຶ່ງກວມເອົາ 52,54% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/01/2017 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 59.979,27 ຕື້ກີບ ເພີ່ມຂຶ້ນ 1,23% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບກວມເອົາ 47,60% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 52,40% ຂອງສິນເຊື່ອທັງໝົດ;

– ໃນເດືອນ 01/2017 ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 72,10 ຕື້ກີບ ທຽບໃສ່ເດືອນຜ່ານມາຫຼຸດລົງ 12,3 ຕື້ກີບ ເທົ່າກັບ 17,06%, ເກັບຕົ້ນທຶນໄດ້ 27,09 ຕື້ກີບ ທຽບໃສ່ເດືອນຜ່ານມາຫຼຸດລົງ 12,62% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 01/2017 ມີຈຳນວນ 2.972,79 ຕື້ກີບ ເທົ່າກັບ 97,52% ຂອງແຜນການປີ (3.048,54 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 1.969,95 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 280,22 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 288,71 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 433,91 ຕື້ກີບ;

– ຍອດເຫຼືອໜີ້ຕ້ອງຮັບທວງຍາກ[4] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 12/2016 ມີຈຳນວນ 2.249,95 ຕື້ກີບ ຫຼຸດລົງ 231,78 ຕື້ກີບ ຫຼື ຫຼຸດລົງ 9,34% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 6,65% ຂອງຍອດເຫຼືອສິນເຊື່ອທັງໝົດ.

---

2 ອັດຕາແລກປ່ຽນສະເລ່ຍຂອງ ວັນທີ 14/12/2016-13/01/2017;

3 ອັດຕາແລກປ່ຽນສະເລ່ຍຂອງ ວັນທີ 14/11/2016-13/12/2016;

4 ໃນເດືອນ 01/2017 ການແກ້ໄຂ NPL ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນໄດ້ບໍ່ຄົບຖ້ວນ.

4. ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ

4.1. ການເຄື່ອນໄຫວຊໍາລະສະສາງ

ການຊໍາລະສະສາງດ້ວຍແຊັກຜ່ານສູນຊໍາລະສະສາງໃນເດືອນນີ້ ມີຈໍານວນ 3.043 ສະບັບ ຫຼຸດລົງ 21,53% ເປັນເງິນຈໍານວນ 1.699,54 ຕື້ກີບ ຫຼຸດລົງ 2,06% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈໍານວນ 134 ຄັ້ງ ຫຼຸດລົງ 4,28% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 746,72 ຕື້ກີບ ເພີ່ມຂຶ້ນ 2,97% ເມື່ອທຽບໃສ່ເດືອນຜ່ານມາ; ສໍາລັບການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/12/2016-24/01/2017 ມີຈໍານວນ 9.532 ຄັ້ງ ລາຍລະອຽດມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ 9.412 ຄັ້ງ ມີມູນຄ່າການໂອນ 2.213,79 ຕື້ກີບ ເພີ່ມຂຶ້ນ 10,36% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 2.505 ຄັ້ງ. ໃນນັ້ນມີທະນາຄານທີ່ເຮັດທຸລະກໍາທັງໝົດ 36 ທະນາຄານ ແລະ Bconnex;
- **ສະກຸນເງິນບາດ:** ມີການເຄື່ອນໄຫວ MT 202 ຈໍານວນ 1 ຄັ້ງ ມີມູນຄ່າການໂອນ 50.000.000 ບາດ;
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈໍານວນ 119 ຄັ້ງ ມີມູນຄ່າການໂອນ 339,84 ຕື້ກີບ;
- **ສະກຸນເງິນໂດລາສະຫະລັດ:** ບໍ່ມີການເຄື່ອນໄຫວ.

4.2 ການຊື້-ຂາຍພັນທະບັດ

- ໃນເດືອນ 01/2017 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄໍ້າປະກັນ) ມີການຈໍາໜ່າຍ ຈໍານວນ 371 ຕື້ກີບ ຊຶ່ງປະກອບດ້ວຍ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈໍານວນ 356 ຕື້ກີບ ແລະ ກອງທຶນປົກປ້ອງຜູ້ຝາກເງິນ ຈໍານວນ 15 ຕື້ກີບ;
- ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.341 ຕື້ກີບ ແລະ 90 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 554 ຕື້ກີບ ແລະ 90 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.678 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ ຈໍານວນ 2.109 ຕື້ກີບ);
- ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 01/2017 ບໍ່ມີການເຄື່ອນໄຫວ, ປະຈຸບັນມີຍອດເຫຼືອພັນທະບັດບໍ່ໄດ້ຖອນທັງໝົດ ຈໍານວນ 354 ລ້ານໂດລາສະຫະລັດ.

5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.030,60 ຈຸດ ເພີ່ມຂຶ້ນ 1,77% ເມື່ອທຽບໃສ່ເດືອນຜ່ານມາ, ຕະຫຼອດເດືອນ ມີປະລິມານຊື້-ຂາຍຮຸ້ນທັງໝົດ 3,35 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 16,57 ຕື້ກີບ ເພີ່ມຂຶ້ນ 816,72% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 54,60% ຂອງມູນຄ່າການຊື້-ຂາຍທັງໝົດ;
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.793 ກີບ ເພີ່ມຂຶ້ນ 757 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 183.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,06 ຕື້ກີບ ເພີ່ມຂຶ້ນ 52% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 46,09% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,49%;
- ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.028 ກີບ ເພີ່ມຂຶ້ນ 23 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2,98 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 15 ຕື້ກີບ ເພີ່ມຂຶ້ນ 1.315,59% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 39,70% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,23%;

- ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 5.780 ກີບ ເພີ່ມຂຶ້ນ 372 ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 15.100 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 87,28 ລ້ານກີບ ເພີ່ມຂຶ້ນ 164,58% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 19,22% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,78%;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.481 ກີບ ຫຼຸດລົງ 19 ກີບ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 161.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 401,7 ລ້ານກີບ ເພີ່ມຂຶ້ນ 2.769,32% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງ ປະເທດສະເລ່ຍ ກວມເອົາ 66,07% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%.

6. <u>ວຽກງານພົ້ນເດັ່ນອື່ນໆ</u>

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 373,8 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 7% ທຽບໃສ່ເດືອນຜ່ານມາ. ໃນນີ້ມີ 285,32 ລ້ານໂດລາສະຫະລັດ (ກວມເອົາ 76% ຂອງເງິນທັງໝົດ); 1,98 ຕື້ບາດ; 224.480 ເອີໂຣ; 20.030 ຝຣັ່ງສະວິດ; 13.585 ປອນສະເຕີລິ້ງ; 17,04 ລ້ານເຢັນ; 106.35 ໂດລາການາດາ; 154,98 ລ້ານໂດລາອົດສະຕາລີ; 1.450 ໂດລານິວຊີແລນ; 5.000 ໂຄຣນາສະວີເດັນ; 1.600 ຣິງກິດ ແລະ 100 ໂດລາບຣູໄນ;

– ສຳເລັດການມອບ-ຮັບໃບອະນຸຍາດດຳເນີນທຸລະກິດຖາວອນ ໃຫ້ແກ່ ສກຈບ ອາລີພັດທະນາ; ສຳເລັດການອອກໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ໃຫ້ແກ່ ສກຈບ ອຳມະລາ ມະຫາບຸດ, ບໍລິສັດ ສີສະຫວັດ ເຊົ່າສິນເຊື່ອ ຈຳກັດ ແລະ ໂຮງຊວດຈຳ ສະຫຼອງໄຊ;

– ໃນເດືອນ 01/2017 ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ ຈາກທະນາຄານທຸລະກິດຈຳນວນ 15 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 510 ສະບັບ.

# <u>ພາກທີ II</u>

# <u>ວຽກງານຈຸດສຸມໃນເດືອນຕໍ່ໄປ</u>

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານ ຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ,ສົ່ງເສີມການນຳໃຊ້ເງິນກີບ ແລະການຊຳລະໂດຍບໍ່ໃຊ້ເງິນສົດ, ສືບຕໍ່ລົງກວດກາຕິດຕາມ ສະພາບການຕົວລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ວຽກງານປະເມີນການກໍ່ສ້າງພັກເຂັ້ມແຂງ-ຮອບດ້ານ ປະຈຳປີ 2016 ແລະ ສືບຕໍ່ປະເມີນຜົນງານພະນັກງານ ທຫລ ປະຈຳປີ 2016 ໃຫ້ສຳເລັດ;

– ສືບຕໍ່ເຮັດບົດສະຫຼຸບການເຄື່ອນໄຫວວຽກງານຂອງ ທຫລ ປະຈຳປີ 2016 ແລະ ທິດທາງປີ 2017, ແລະ ສືບຕໍ່ເຮັດບົດລາຍງານການເຄື່ອນໄຫວວຽກງານຂອງ ທຫລ 5 ປີ 2011-2015 ແລະ ແຜນການ 2016-2020 ເພື່ອກະກຽມໃຫ້ແກ່ກອງປະຊຸມທະນາຄານທົ່ວປະເທດ;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ກົດໝາຍວ່າດ້ວຍທະນາຄານທຸລະກິດ, ຂໍ້ຕົກລົງວ່າດ້ວຍການບໍລິຫານຊັບສິນຂອງທະນາຄານ, ຂໍ້ຕົກລົງວ່າດ້ວຍອັດຕາສ່ວນຄວາມພຽງພໍຂອງທຶນສຳລັບທະນາຄານທຸລະກິດ, ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ, ຮ່າງຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດນຳເຂົ້າ-ສົ່ງອອກຄຳ, ຮ່າງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;

– ສືບຕໍ່ຄົ້ນຄວ້າຫຼັກການບາເຊວ 2 ວິທີການປະຕິບັດຂອງສາກົນ ເພື່ອຮັບປະກັນການຄຸ້ມຄອງທະນາຄານທຸລະກິດຕາມຫຼັກການສາກົນ, ສູ້ຊົນແກ້ໄຂໜີ້ NPL ທະນາຄານທຸລະກິດລັດໃນ-ນອກຜັງ ໃຫ້ໄດ້ຕາມແຜນການ;

– ສືບຕໍ່ລົງຕິດຕາມມາດຕະການຊົ່ວຄາວ 2 ທະນາຄານທຸລະກິດລັດ (ທະນາຄານສົ່ງເສີມກະສິກຳ ແລະ ທະນາຄານພັດທະນາລາວ);

– ກະກຽມນຳໃຊ້ມາດຕະການການຍຸບເລີກ ໂຮງຊວດຈຳທີ່ໄດ້ຮັບອະນຸຍາດຈາກ ທຫລ ແຕ່ບໍ່ເຄື່ອນໄຫວດຳເນີນທຸລະກິດ ຈຳນວນ 3 ແຫ່ງ ຄື: ໂຮງຊວດຈຳ ຊິເຄ, ໂຮງຊວດຈຳ ບົວທິບ ແລະ ໂຮງຊວດຈຳ ວຽງຈັນ ມໍເຕີ ມາເກັດ;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ດຣ ສົມພາວ ໄຟສິດ

<u>ສົ່ງ:</u>

- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການ ສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ.
- ກົມສັງລວມເສດຖະກິດ, ຫສນຍ.
- ຫ້ອງການກະຊວງແຜນການ ແລະ ການລົງທຶນ.
- ຫ້ອງການກະຊວງການເງິນ.
- ບັນດາກົມ ແລະ ທຽບເທົ່າກົມຜາຍໃນ ທຫລ.
- ຄະນະຫ້ອງການ ທຫລ.
- ສຳເນົາ.